75

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----ຯຯ★ຯຯ----

ອົງການກວດກາລັດຖະບານ

ເລກທີ 46/ອກລ.

ນະຄອນຫຼວງວຽງຈັນ, ວັນທີ 4/03/2015.

# ບົດແນະນຳ

## ການຈັດຕັ້ງປະຕິບັດດຳລັດ ຂອງລັດຖະບານ

## ວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີ

---

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 245/ນຍ, ລົງວັນທີ 16/08/2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດຖະບານ.
- ເພື່ອຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ເລກທີ 01/ລບ, ລົງວັນທີ 6/1/2015 ວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີ ໄດ້ດຳເນີນໄປຢ່າງຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ, ອົງການກວດກາລັດຖະບານຈຶ່ງໄດ້ອອກບົດແນະນຳຊຶ່ງມີເນື້ອໃນລະອຽດດັ່ງນີ້:

### I. ຈຸດປະສົງຄາດໝາຍ.

1. ເພື່ອເຮັດໃຫ້ດຳລັດ ຂອງລັດຖະບານ ວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ, ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນ;

2. ເປັນບ່ອນອີງໃຫ້ຄະນະພັກ, ອຳນາດການປົກຄອງ ແລະ ຄະນະກວດກາ ກໍ່ຄືອົງການກວດກາລັດແຕ່ລະຂັ້ນ ໃນການຕິດຕາມ, ກວດກາໂຄງການລົງທຶນຂອງລັດ ໃຫ້ດຳເນີນໄປຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບການລົງທຶນຂອງລັດ;

3. ເພື່ອເຮັດໃຫ້ຄະນະກວດກາ ກໍ່ຄືອົງການກວດກາລັດແຕ່ລະຂັ້ນ ແລະ ຜູ້ປະຕິບັດໂຄງການ ຢູ່ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຮັບຮູ້, ເຂົ້າໃຈເປັນເອກະພາບ ແລະ ເປັນເຈົ້າການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ ແນໃສ່ເຮັດໃຫ້ບັນດາໂຄງການລົງທຶນຂອງລັດ ໄດ້ດຳເນີນໄປຢ່າງຖືກຕ້ອງ, ມີຄຸນນະພາບ ແລະ ມີຄວາມໂປ່ງໃສ.

### II. ແນະນຳຕື່ມບາງເນື້ອໃນ ຂອງດຳລັດ ດັ່ງນີ້:

1. ໃນມາດຕາ 2 ຂອງດຳລັດ ໄດ້ກຳນົດວ່າ: "... ແມ່ນການຕິດຕາມ, ກວດກາປົກກະຕິ ຕໍ່ກັບຜູ້ປະຕິບັດໂຄງການ...ນັບແຕ່ເລີ່ມປະຕິບັດໂຄງການເປັນຕົ້ນໄປ...". ການປະຕິບັດສອງເນື້ອໃນຈິດໃຈດັ່ງກ່າວແມ່ນ:

1.1. ຜູ້ປະຕິບັດການຕິດຕາມ-ກວດກາປົກກະຕິດັ່ງກ່າວນັ້ນ ແມ່ນອົງການປົກຄອງແຕ່ລະຂັ້ນ (ກະຊວງ-ອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ) ແລະ ຄະນະກວດກາ ກໍ່ຄືກົມກວດກາ ແລະ ອົງການກວດກາລັດແຕ່ລະຂັ້ນ ໂດຍມີການຈັດຕັ້ງມອບໝາຍໃຫ້ຄະນະ ຫຼື ໜ່ວຍງານສະເພາະ ເປັນຜູ້ປະຕິບັດການຕົວຈິງຮ່ວມກັບຜູ້ປະຕິບັດໂຄງການ ພາຍໃຕ້ການຊີ້ນຳ, ຕິດຕາມ, ຊຸກຍູ້ຢ່າງໃກ້ຊິດ ຂອງກົມກວດກາ ແລະ ຄະນະກວດກາ ກໍ່ຄືອົງການກວດກາລັດແຕ່ລະຂັ້ນ ແລະ ມີການສະຫຼຸບລາຍງານຂັ້ນເທິງຖັດຕົນເປັນປົກກະຕິ (ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງດຳລັດ ດັ່ງກ່າວ...).

1.2. " ການຕິດຕາມ-ກວດກາ ນັບແຕ່ເລີ່ມປະຕິບັດໂຄງການເປັນຕົ້ນໄປ..." ແມ່ນໃຫ້ລັດຖະມົນຕີ, ຫົວໜ້າອົງການ ຫຼື ຫົວໜ້າກົມກວດກາ, ເຈົ້າຄອງນະຄອນ-ເຈົ້າແຂວງ ຫຼືປະທານອົງການກວດກາຂັ້ນແຂວງ, ເຈົ້າເມືອງ ຫຼືປະທານອົງການກວດກາຂອງເມືອງ ແຕ່ງຕັ້ງຄະນະ ຫຼືໜ່ວຍງານສະເພາະຂອງຕົນ ເຂົ້າຮ່ວມຕິດຕາມ-ກວດກາ ບັນດາວຽກຕົ້ນຕໍຂອງການເລີ່ມຕົ້ນປະຕິບັດໂຄງການ ນັບແຕ່ມື້ເຈົ້າຂອງໂຄງການເລີ່ມກະກຽມປະຕິບັດໂຄງການເປັນຕົ້ນໄປເຊັ່ນ: ການກະກຽມປະມູນ ຫຼືທາບທາມໂຄງການ ແລະອື່ນໆ. ໂຄງການລົງທຶນຂອງລັດ ທີ່ຕ້ອງຕິດຕາມ-ກວດກາໄດ້ກຳນົດໄວ້ແຈ້ງ ໃນມາດຕາ 5 ຂອງດຳລັດ, ແຕ່ຕ້ອງມີການເລືອກເຟັ້ນ ແລະມີຄວາມເປັນເອກະພາບວ່າຈະຕິດຕາມ-ກວດກາໂຄງການໃດ ໂດຍອີງໃສ່ຄວາມສ່ຽງ ແລະມູນຄ່າຂອງໂຄງການເປັນຕົ້ນຕໍ:

- ຄວາມສ່ຽງຂອງໂຄງການ: ຕ້ອງເບິ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ກະທົບເຖິງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກະທົບຕໍ່ຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນບັນດາເຜົ່າ, ກະທົບຕໍ່ສະພາບແວດລ້ອມທຳມະຊາດ-ສັງຄົມ ແລະອື່ນໆ. ພ້ອມກັນນັ້ນ ກໍ່ຕ້ອງເບິ່ງໂຄງການທີ່ມີການພົວພັນກັບຫຼາຍພາກສ່ວນ, ຫຼາຍຂະແໜງການ ຊຶ່ງຈະມີຄວາມສັບສົນໃນເວລາຈັດຕັ້ງປະຕິບັດ, ສະນັ້ນ ຕ້ອງມີການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນເອກະພາບນັບແຕ່ຫົວທີ.

- ລະດັບມູນຄ່າໂຄງການລົງທຶນຂອງລັດ ທີ່ຕ້ອງຕິດຕາມ-ກວດກາເລີ່ມແຕ່ຫົວທີ ຢູ່ຂັ້ນເມືອງ ແມ່ນໂຄງການຂອງເມືອງທີ່ມີມູນຄ່າແຕ່ 1 ຕື້ກີບຂຶ້ນໄປ (ໜຶ່ງຕື້ກີບຂຶ້ນໄປ); ໂຄງການຂອງນະຄອນ, ຂອງແຂວງ, ຂອງກະຊວງ-ອົງການ ທີ່ຕ້ອງຕິດຕາມ-ກວດກາເລີ່ມແຕ່ຫົວທີ ຕ້ອງມີມູນຄ່າແຕ່ 5 ຕື້ກີບຂຶ້ນໄປ (ຫ້າຕື້ກີບຂຶ້ນໄປ) ຖ້າມູນຄ່າໂຄງການໃດຕ່ຳ ຫຼຸດໜຶ່ງຕື້ກີບ (ສຳລັບຢູ່ເມືອງ), ຫຼຸດ 5 ຕື້ກີບ (ສຳລັບໂຄງການຂອງກະຊວງ-ອົງການ, ແຂວງ, ນະຄອນ), ແຕ່ເຫັນວ່າມີຄວາມສ່ຽງສູງ ກໍ່ອາດຈະດຳເນີນການຕິດຕາມ-ກວດກາເລີ່ມແຕ່ຫົວທີ ໂດຍແມ່ນເຈົ້າຂອງໂຄງການ ແລະ ກົມກວດກາ ຫຼື ອົງການກວດກາຢູ່ບ່ອນນັ້ນ ເປັນຜູ້ຕົກລົງ.

ສຳລັບມູນຄ່າໂຄງການລະດັບຊາດ ຈະຕິດຕາມ-ກວດກາໂຄງການທີ່ມູນຄ່າລະດັບໃດນັ້ນ ແມ່ນອົງການກວດກາລັດຖະບານ ສົມທົບກັບກະຊວງແຜນການ ແລະການລົງທຶນ ແລະກະຊວງທີ່ກ່ຽວຂ້ອງ ພ້ອມກັນຄົ້ນຄວ້າເປັນເອກະພາບ ແລ້ວສະເໜີນາຍົກລັດຖະມົນຕີ ຕົກລົງ.

(ເນື້ອໃນ, ຂັ້ນຕອນ ແລະວິທີດຳເນີນການຕິດຕາມ-ກວດກາເລີ່ມແຕ່ຫົວທີ ໄດ້ກຳນົດໄວ້ແຈ້ງໃນມາດຕາ 6, 7 ຂອງດຳລັດ ສະບັບດັ່ງກ່າວ).

2. ໃນມາດຕາ 7 ຂໍ້ ກ.3 ຂອງດຳລັດ ໃຫ້ປະຕິບັດດັ່ງນີ້:

2.1. ກ່ອນຈະດຳເນີນການຕິດຕາມ-ກວດກາ ຕ້ອງສ້າງແຜນການເຄື່ອນໄຫວຕິດຕາມ-ກວດກາ ຄັກແນ່ ກຳນົດແຈ້ງຈຸດປະສົງລະດັບຄາດໝາຍ, ເນື້ອໃນ, ຂັ້ນຕອນ, ວິທີການ, ໄລຍະເວລາຂອງການຕິດຕາມ-ກວດກາ ໂດຍໃຫ້ສອດຄ່ອງກັບສະພາບຕົວຈິງຂອງໂຄງການ ແລະ ຖືກຕ້ອງ-ສອດຄ່ອງກັບຂໍ້ອື່ນໆ ໃນມາດຕາ 7 ດຽວກັນນີ້ ແລະ ມາດຕາ 8 ຂອງດຳລັດ ສະບັບດັ່ງກ່າວ. ແຜນການທີ່ສ້າງຂຶ້ນນັ້ນ ຕ້ອງເປັນເອກະພາບນຳເຈົ້າຂອງໂຄງການ ແລະ ຜູ້ປະຕິບັດໂຄງການ ເພື່ອສະດວກໃນການຈັດຕັ້ງປະຕິບັດ.

2.2. ຕ້ອງວາງອອກລະບຽບສະເພາະ ສຳລັບຄະນະ ຫຼື ໜ່ວຍງານທີ່ໄດ້ແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ຕິດຕາມ-ກວດກາປະຈຳໂຄງການ. ເນື້ອໃນສຳຄັນຕົ້ນຕໍຂອງລະບຽບ ທີ່ຕ້ອງເອົາໃຈໃສ່ ແມ່ນ:

- ຄະນະ ຫຼື ໜ່ວຍງານ (ພະນັກງານທັງໝົດ ໃນຄະນະ ຫຼື ໜ່ວຍງານ) ຕ້ອງເປັນຄົນກາງອີຫຼີ ບໍ່ອຽງຊ້າຍອຽງຂວາ, ບໍ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ຂອງຜູ້ປະຕິບັດໂຄງການ, ຕ້ອງຊື່ຕົງ, ພາວະວິໄສ, ເບິ່ງບັນຫາ-ວິໄຈຂໍ້ມູນຕ້ອງຊັດເຈນ, ຖືກຕົວຈິງ, ໃຫ້ການປຶກສາ ຫຼື ສະເໜີດັດແກ້ບັນຫາຕ່າງໆ ຕ້ອງບົນພື້ນຖານກົດໝາຍ ແລະ ລະບຽບການຕ່າງໆທີ່ມີໄວ້ ລວມທັງສັນຍາຮັບເໝົາກໍ່ສ້າງ ທີ່ຜູ້ປະຕິບັດໂຄງການໄດ້ ເຊັນນຳກັນ;

- ພະນັກງານທັງໝົດ ໃນຄະນະ ຫຼື ໜ່ວຍງານທີ່ຖືກແຕ່ງຕັ້ງມອບໝາຍໄປປະຕິບັດໜ້າທີ່ຕິດຕາມ-ກວດກາ ຕ້ອງມີຄວາມຮັບຜິດຊອບສູງ, ມີທັດສະນະຖືກຕ້ອງ, ມີການພົວພັນສະນິດແໜ້ນກັບຜູ້ປະຕິບັດໂຄງການຄື: ເຈົ້າຂອງໂຄງການ, ບໍລິສັດທີ່ປຶກສາໂຄງການ ແລະ ຜູ້ຮັບເໝົາ, ນອກນັ້ນ ກໍ່ມີການພົວພັນຕິດແທດກັບການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ລວມທັງການຈັດຕັ້ງຂອງບ້ານ ແລະ ປະຊາຊົນ ບ່ອນທີ່ໂຄງການຕັ້ງຢູ່;

- ໄລຍະພວມປະຕິບັດໜ້າທີ່ຕິດຕາມ-ກວດກາ ແມ່ນບໍ່ອະນຸຍາດໃຫ້ຜູ້ໃດໃນໜ່ວຍງານກັບມາປະຕິບັດໜ້າທີ່ປະຈຳການຢູ່ສຳນັກງານຫ້ອງການເດີມຂອງຕົນ ຫຼື ໜີປະໜ້າທີ່ໄປບ່ອນອື່ນ ໂດຍບໍ່ໄດ້ຮັບການອະນຸຍາດຈາກຜູ້ເປັນຫົວໜ້າ ຖ້າຜູ້ໃດລະເມີດຈະຖືກສຳຫຼວດຕັກເຕືອນ ຫຼື ລົງວິໄນຕາມເຫັນສົມຄວນ.

- ພະນັກງານທັງໝົດໃນໜ່ວຍງານ ຕ້ອງມີຄວາມໜັກແໜ້ນ ບໍ່ຂໍ ແລະ ບໍ່ຮັບສິນບົນຈາກຝ່າຍໃດຝ່າຍໜຶ່ງຢ່າງເດັດຂາດ ຖ້າຜູ້ໃດກະທຳຖືວ່າເປັນການກະທຳຜິດທາງອາຍາ ຕາມທີ່ກົດໝາຍຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນໆກຳນົດໄວ້ ແລະ ຜູ້ນັ້ນຈະຕ້ອງຖືກກວດກາ ແລະ ດຳເນີນຄະດີຕາມກົດໝາຍກຳນົດໄວ້.

ນອກຈາກ 4 ບັນຫາດັ່ງກ່າວ ຍັງຕ້ອງຄົ້ນຄວ້າກຳນົດບັນຫາລະອຽດອື່ນໆໃຫ້ຈະແຈ້ງ, ຫັດກຸມ ເພື່ອຄຸ້ມຄອງ-ປ້ອງກັນພະນັກງານ ທີ່ຖືກແຕ່ງຕັ້ງໃຫ້ໄປປະຕິບັດໜ້າທີ່ຕິດຕາມ-ກວດກາ ປະຈຳໂຄງການຕ່າງໆໃຫ້ດີ.

2.3. ພາຍຫຼັງໄດ້ແຕ່ງຕັ້ງເປັນຄະນະ ຫຼື ເປັນໜ່ວຍງານແລ້ວ ຕ້ອງເຕົ້າໂຮມຝຶກອົບຮົມ-ແນະນຳໃຫ້ພະນັກງານທັງໝົດໃນຄະນະ ຫຼື ໃນໜ່ວຍງານນັ້ນ ໃຫ້ກຳແໜ້ນຈຸດປະສົງລະດັບຄາດໝາຍ, ເນື້ອໃນຕ່າງໆຂອງການຕິດຕາມ-ກວດກາ (ກຳແໜ້ນເນື້ອໃນດຳລັດ; ກຳແໜ້ນແຜນການເຄື່ອນໄຫວຕິດຕາມ-ກວດກາ ແລະ ກຳແໜ້ນລະບຽບການສະເພາະທີ່ກ່າວມາຂ້າງເທິງນັ້ນ ແລະ ບັນຫາອື່ນໆ...) ເພື່ອໃຫ້ທຸກຄົນເປັນເຈົ້າການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

3. ການແກ້ໄຂຜົນຂອງການຕິດຕາມ-ກວດກາ:

3.1. ໃນມາດຕາ 19 ຂອງດຳລັດ ໄດ້ກຳນົດວ່າ " ເມື່ອເຫັນວ່າການຈັດຕັ້ງປະຕິບັດໂຄງການ ຈະແມ່ນຂອດໃດ ຫຼື ວຽກໃດກໍ່ຕາມ ຫາກດຳເນີນໄປບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ການລົງທຶນຂອງລັດ ຕ້ອງປຶກສາຫາລືສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂແຕ່ຫົວທີ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ..." ຕົວຢ່າງ:

- ຂັ້ນຕອນການກະກຽມໂຄງການ: ຖ້າເຫັນວ່າມີການລະເມີດ ບໍ່ປະຕິບັດຖືກຕ້ອງຕາມມາດຕາ 17, 18 ຂອງກົດໝາຍລົງທຶນຂອງລັດ ແລະ ມາດຕາ 6 ຂອງດຳລັດສະບັບນີ້ ເຊັ່ນ: ບໍ່ມີບົດລາຍງານການສຳຫຼວດອອກແບບ; ບໍ່ມີບົດວິພາກເສດຖະກິດ-ເຕັກນິກ; ບໍ່ມີບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ-ສັງຄົມ; ປະສິດທິຜົນຂອງໂຄງການບໍ່ສູງ; ມູນຄ່າຂອງໂຄງການສູງເກີນຄວາມຈິງ; ການຈັດຕັ້ງປະມູນ ແລະ ຮັບຮອງເອົາຜູ້ຊະນະການປະມູນ ບໍ່ດຳເນີນໄປຖືກຕ້ອງຕາມຂັ້ນຕອນ; ເນື້ອໃນສັນຍາຮັບເໝົາໂຄງການບໍ່ຫັດກຸມ ແລະ ອື່ນໆ... ຄະນະ ຫຼື ໜ່ວຍງານປະຕິບັດໜ້າທີ່ຕິດຕາມ-ກວດກາໂຄງການນັ້ນ ຕ້ອງເກັບກຳລະອຽດແຕ່ລະ ບັນຫາໃຫ້ຈະແຈ້ງ ໂດຍມີການປະສານສົມທົບກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ແລ້ວນຳເອົາບັນຫາເຫຼົ່ານັ້ນ ໄປປຶກສາຫາລືສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ແລ້ວຈິ່ງຈັດຕັ້ງປະຕິບັດໂຄງການ.

- ໄລຍະເວລາພວມດຳເນີນໂຄງການ: ເມື່ອເຫັນວ່າຜູ້ປະຕິບັດໂຄງການບໍ່ປະຕິບັດຕາມສັນຍາ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ເຊັ່ນ: ມີການດັດແປງເອກະສານຕ່າງໆທີ່ກ່ຽວຂ້ອງກັບໂຄງການ; ດັດແປງຮູບແບບຂອງໂຄງການ; ດັດແປງມາດຖານເຕັກນິກ; ດັດແປງໜ້າວຽກ; ດັດແປງຫົວໜ່ວຍລາຄາ; ນຳໃຊ້ກົນຈັກ ແລະ ວັດສະດຸກໍ່ສ້າງອື່ນໆບໍ່ຖືກຕາມໄດ້ກຳນົດໄວ້ໃນສັນຍາ; ມີການສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ອື່ນໆ.... ຄະນະ ຫຼື ໜ່ວຍງານທີ່ປະຕິບັດໜ້າທີ່ຕິດຕາມ-ກວດກາ ຕ້ອງເກັບກຳລະອຽດ ແລະ ດຳເນີນການກວດກາລົງເລິກແຕລະບັນຫາໃຫ້ຈະແຈ້ງ ແລ້ວນຳເອົາບັນຫາເຫຼົ່ານັ້ນໄປປຶກສາຫາລື ແລະ ສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂໃຫ້ຖືກຕ້ອງ ແລະ ທັນເວລາ.

3.2. ຜ່ານການຕິດຕາມ, ກວດກາເຫັນວ່າມີການລະເມີດບັນຫາໃດໜຶ່ງ ແລະ ພາຍຫຼັງໄດ້ສະຫຼຸບລາຍງານປຶກສາຫາລື ແລະ ສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂ, ແຕ່ຖ້າຜູ້ປະຕິບັດໂຄງການບໍ່ປະຕິບັດຕາມ ແມ່ນໃຫ້ຄະນະ ຫຼື ໜ່ວຍງານຕິດຕາມ-ກວດກາທີ່ຖືກມອບໝາຍໃຫ້ຕິດຕາມ-ກວດກາໂຄງການນັ້ນ ຫຼືອົງການກວດກາຂັ້ນນັ້ນ ສະເໜີໃຫ້ຜູ້ອອກຂໍ້ຕົກລົງ ຫຼືອົງການທີ່ມີສິດອຳນາດດຳເນີນການດັ່ງນີ້:

- ຄັ້ງທຳອິດເຊີນເອົາຜູ້ປະຕິບັດໂຄງການ (ຜູ້ລະເມີດ) ມາຕັກເຕືອນ ໂດຍແມ່ນຄະນະ ຫຼື ໜ່ວຍງານຕິດຕາມ, ກວດກາ ຫຼື ອົງການກວດກາຂັ້ນນັ້ນເປັນຜູ້ດຳເນີນການ ຫຼື ສະເໜີໃຫ້ອົງການທີ່ມີສິດອຳນາດ (ຜູ້ອອກຂໍ້ຕົກລົງ) ເປັນຜູ້ຕັກເຕືອນ ໂດຍມີບົດບັນທຶກມີລາຍເຊັນຮັບຮູ້ຂອງຜູ້ລະເມີດ ແລະ ມີກຳນົດເວລາໃຫ້ດັດແປງແກ້ໄຂບັນຫາຕ່າງໆຕາມທີ່ໄດ້ສະຫຼຸບ ແລະ ສະເໜີໃຫ້ດັດແປງແກ້ໄຂທຸກຂໍ້ຄວາມ.

- ຜ່ານການຕັກເຕືອນ ແຕ່ຜູ້ປະຕິບັດໂຄງການຫາກບໍ່ມີການດັດແປງແກ້ໄຂ ຫຼື ດັດແປງແກ້ໄຂບໍ່ຄົບຖ້ວນຕາມໄດ້ກຳນົດໄວ້ໃນບົດສະຫຼຸບ, ບົດແຈ້ງການ ແລະ ຂໍ້ຕົກລົງຜົນຂອງການກວດກາ ໂດຍບໍ່ມີເຫດຜົນ

ພຽງພໍ, ຄະນະ ຫຼື ໜ່ວຍງານຕິດຕາມ, ກວດກາ ຫຼື ອົງການກວດກາຂັ້ນນັ້ນ ສະເໜີໃຫ້ຜູ້ອອກຂໍ້ຕົກລົງ ຫຼື ອົງການທີ່ມີສິດອຳນາດອອກຂໍ້ຕົກລົງໃຫ້ປະຕິບັດຕາມ ມາດຕາ 42 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ໃຫ້ໂຈະການດຳເນີນກິດຈະການຊົ່ວຄາວ ເພື່ອກວດກາລົງເລິກ ຫຼືໂຈະອ່າຍທຶນໂຄງການ ຕາມມາດຕາ 43 ຂອງກົດໝາຍ ວ່າດ້ວຍການລົງທຶນຂອງລັດ (ໃຫ້ຄົ້ນຄວ້າກຳແໜ້ນເນື້ອໃນ ຂອງມາດຕາ 42, 43 ທີ່ກ່າວມານີ້...).

- ຜ່ານການກວດກາລົງເລິກ ແລະ ໄດ້ມີການຕັກເຕືອນ, ມີການໂຈະການດຳເນີນກິດຈະການຊົ່ວຄາວແລ້ວ ແຕ່ຜູ້ປະຕິບັດໂຄງການບໍ່ມີການດັດແປງແກ້ໄຂ ແລະ ເຫັນວ່າເປັນການລະເມີດຕໍ່ກົດໝາຍການລົງທຶນຂອງລັດ ມາດຕາ 44 ແລະ ຂໍ້ 4 ມາດຕາ 19 ຂອງດຳລັດສະບັບນີ້, ອົງການກວດກາ ສະເໜີຕໍ່ອົງການທີ່ມີສິດອຳນາດຂັ້ນຂອງຕົນ ຫຼື ຂັ້ນເທິງຖັດນັ້ນ ອອກຂໍ້ຕົກລົງຍົກເລີກໂຄງການລົງທຶນຂອງລັດ ທີ່ດຳເນີນໄປບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆນັ້ນຢ່າງຂາດຕົວ.

3.3. ໃນກໍລະນີຜູ້ປະຕິບັດໂຄງການ ມີຄວາມເຫັນບໍ່ເປັນເອກະພາບກັບຄະນະຕິດຕາມ, ກວດກາຕໍ່ກັບບັນຫາໃດໜຶ່ງ ຫຼື ຫຼາຍບັນຫາໃນການຈັດຕັ້ງປະຕິບັດໂຄງການ, ຕ້ອງລາຍງານເປັນລາຍລັກອັກສອນ ແລະ ມີຫຼັກຖານຢັ້ງຢືນສົ່ງໃຫ້ເຈົ້າຂອງໂຄງການ; ເຈົ້າຂອງໂຄງການຕ້ອງປະສານງານກັບພາກສ່ວນກ່ຽວຂ້ອງ ເພື່ອເປີດກອງປະຊຸມຄົ້ນຄວ້າປຶກສາຫາລື ແລະ ມີວິທີການແກ້ໄຂ ພາຍໃນ 10 ວັນ ນັບແຕ່ວັນໄດ້ຮັບການລາຍງານ. ການແກ້ໄຂຂໍ້ຂັດແຍ່ງນັ້ນ ຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ ໃນມາດຕາ 67, 68, 69, 70 ແລະ 71 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

4. ສ່ວນມາດຕາອື່ນໆຂອງດຳລັດ ທີ່ບໍ່ໄດ້ແນະນຳຕື່ມນັ້ນ ແມ່ນໃຫ້ຈັດຕັ້ງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນດຳລັດ, ແຕ່ຜ່ານການປະຕິບັດຕົວຈິງຖ້າມີບັນຫາໃດບໍ່ແຈ້ງ ແມ່ນໃຫ້ລາຍງານຂໍຄຳເຫັນຈາກລັດຖະບານ ໂດຍຜ່ານອົງການກວດກາລັດຖະບານ.

5. ງົບປະມານຮັບໃຊ້ການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີ ແມ່ນໃຫ້ປະຕິບັດຕາມແຜນງົບປະມານທີ່ໄດ້ຂຶ້ນໄວ້ຂອງໂຄງການ, ການນຳໃຊ້ຕົວຈິງ ແມ່ນປະຕິບັດຕາມລະບຽບການທີ່ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ປະກາດໃຊ້ໃນແຕ່ລະໄລຍະ.

## III. ການຈັດຕັ້ງປະຕິບັດ.

1. ຄະນະນຳບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມເຜີຍແຜ່ແນະນຳດຳລັດວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ທົ່ວທີໃຫ້ພະນັກງານໃນຂະແໜງການທີ່ກ່ຽວຂ້ອງ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ.

2. ໃຫ້ບັນດາກະຊວງ-ອົງການ, ນະຄອນຫຼວງ, ບັນດາແຂວງ ແລະ ທຸກເມືອງໃນທົ່ວປະເທດຄົ້ນຄວ້າກຳແໜ້ນ ແລະຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ວ່າດ້ວຍການຕິດຕາມ-ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີສະບັບດັ່ງກ່າວ ເລີ່ມແຕ່ສົກງົບປະມານ ປີ 2014-2015 ເປັນຕົ້ນໄປ. ແຕ່ໃນປີທຳອິດນີ້ ໃຫ້ຈັດຕັ້ງປະຕິບັດດັ່ງນີ້:

- ໃຫ້ແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນຕ່າງໆ ເລືອກເອົາ 1 ຫາ 2 (ໜຶ່ງຫາສອງ) ໂຄງການ ເຮັດທົດລອງ ຫຼືເຮັດເປັນຄັ້ງທຳອິດ ເພື່ອຖອດຖອນບົດຮຽນ. ຮອດສົກງົບປະມານປີຕໍ່ໄປ ຈຶ່ງເຮັດກວ້າງອອກ ໂດຍມີການເລືອກເຟັ້ນ, ມີຈຸດສຸມຄືໄດ້ກຳນົດໄວ້ໃນດຳລັດ ແລະ ໃນບົດແນະນຳ ສະບັບນີ້.

- ກໍລະນີໂຄງການລົງທຶນຂອງລັດ ສົກປີ 2014 - 2015 ນີ້ ແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນຕ່າງໆ ຫາກໄດ້ລົງມືຈັດຕັ້ງປະຕິບັດໝົດທຸກໂຄງການແລ້ວ ກໍ່ໃຫ້ເລືອກເອົາ 1 ຫາ 2 ໂຄງການ ເພື່ອດຳເນີນການຕິດຕາມ-ກວດກາແຕ່ຫົວທີ ຕາມດຳລັດດັ່ງກ່າວ, ແຕ່ຂັ້ນຕອນປະຕິບັດຕົວຈິງຂອງຄະນະ ຫຼື ໜ່ວຍງານທີ່ຖືກມອບໝາຍໃຫ້ປະຕິບັດໜ້າທີ່ຕິດຕາມ-ກວດການັ້ນ ຈະໄດ້ດຳເນີນດັ່ງນີ້:

+ ເກັບກຳ ແລະ ຄົ້ນຄວ້າຄືນເອກະສານສຳຄັນຕ່າງໆ ທີ່ເຈົ້າຂອງໂຄງການ ກໍ່ຄືຜູ້ປະຕິບັດໂຄງການ ໄດ້ພ້ອມກັນປະຕິບັດມາ ເປັນຕົ້ນຮູບແບບໂຄງການ, ມາດຖານເຕັກນິກ, ມູນຄ່າຂອງໂຄງການ, ການປະມູນ ຫຼື ທາບທາມໂຄງການ, ສັນຍາຮັບເໝົາໂຄງການ ແລະ ອື່ນໆ... ເພື່ອເປັນບ່ອນອີງໃນການສືບຕໍ່ຕິດຕາມ-ກວດກາການປະຕິບັດໜ້າວຽກຂອງໂຄງການ ທີ່ບໍ່ທັນສຳເລັດໃນຂັ້ນຕໍ່ໄປ.

+ ດຳເນີນການຕິດຕາມ-ກວດກາບັນດາວຽກທີ່ຜູ້ປະຕິບັດໂຄງການພວມປະຕິບັດ ແລະຍັງບໍ່ທັນປະຕິບັດ ໂດຍມີການປະສານສົມທົບກັບຜູ້ປະຕິບັດໂຄງການຢ່າງມີແຜນການ ແລະ ເປັນເອກະພາບກັນ.

3. ຄະນະກວດກາ ກໍ່ຄືອົງການກວດກາລັດແຕ່ລະຂັ້ນປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລືເປັນເອກະພາບໃນການຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ແລະ ບົດແນະນຳສະບັບນີ້.

4. ອົງການກວດກາລັດແຕ່ລະຂັ້ນ ມີຄວາມຮັບຜິດຊອບຕິດຕາມ, ກວດກາ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ໃຫ້ຄະນະພັກ-ຄະນະນຳຂັ້ນຂອງຕົນ ແລະ ອົງການກວດກາລັດຂັ້ນເທິງ ເປັນແຕ່ລະໄລຍະ ແລະ ປົກກະຕິ.

5. ຜ່ານການຈັດຕັ້ງປະຕິບັດຕົວຈິງຢູ່ແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນ ຖ້າບັນຫາໃດຫຍຸ້ງຍາກ ໃຫ້ລາຍງານອົງການກວດກາລັດຖະບານ ຮັບຊາບ ແລະ ມີທິດຊີ້ນຳທັນເວລາ.

ປະທານ ອົງການກວດກາລັດຖະບານ

ປະທານ

ດຣ ບຸນທອງ ຈິດມະນີ